ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------------------

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 1923 /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 11 SEP 2012

## ແຈ້ງການ

ເຖິງ: ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ໃນຂອບເຂດທົ່ວປະເທດ

ເລື່ອງ: ປັບປຸງການຈັດຕັ້ງປະຕິບັດຂໍ້ຕົກລົງເລກທີ 2036/ອຄ.ກຂອ ລົງວັນທີ 12 ຕຸລາ 2010 ວ່າດ້ວຍການມອບສິດໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ໃນທົ່ວປະເທດ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ສິດທິພິເສດ (Preferential Certificates of Origin).

- ອີງຕາມຂໍ້ຕົກລົງເລກທີ 2387/ອຄ.ກຂອ ລົງວັນທີ 15 ທັນວາ 2011 ວ່າດ້ວຍການມອບສິດໃຫ້ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດທີ່ໄດ້ຮັບສິດທິພິເສດດ້ານການຄ້າ.
- ອີງຕາມແຈ້ງການເລກທີ 0005/ຫອຄ.ກຂອ ລົງວັນທີ 3 ມັງກອນ 2012 ວ່າດ້ວຍການສະເໜີໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ມອບໂອນສິດໃນການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຟອມ E, AK, AJ, AANZ, SPT ແລະ CO Korea ໃຫ້ແກ່ສະພາການຄ້າ ແລະ ອຸດສາຫະກຳ ຂອງແຂວງ.

ເພື່ອເຮັດໃຫ້ລະບຽບການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດກ່ຽວກັບການອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຢູ່ໃນ ສປປ ລາວ ມີຄວາມເປັນເອກະພາບ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ.

**ລັດຖະມົນຕີ ວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກແຈ້ງການດັ່ງນີ້:**

1. ມອບໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ໃນທົ່ວປະເທດສືບຕໍ່ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຈຳນວນ 06 ຊະນິດຟອມ ຄືດັ່ງທີ່ເຄີຍປະຕິບັດຜ່ານມາ ເຊັ່ນ: ຟອມ A, D, S, AI, DFTP ແລະ APTA.
2. ສຳລັບຟອມ A ແມ່ນໃຫ້ປັບປຸງ ມາດຕາ 1 ຂໍ້ທີ 1 ຂອງຂໍ້ຕົກລົງ ເລກທີ 2036/ອຄ.ກຂອ ລົງວັນທີ 12 ຕຸລາ 2010 ແລະ ໃຫ້ອອກສຳລັບສິນຄ້າທີ່ເປັນຜະລິດຕະພັນທີ່ໄດ້ມາ ຫຼື ຜະລິດຂຶ້ນ ໂດຍການນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ ດັ່ງທີ່ລະບຸໄວ້ໃນຂໍ້ 1 ມາດຕາ 7 ຂອງດຳລັດເລກທີ 228/ນຍ ລົງວັນທີ 22 ເມສາ 2010.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ຫົວໜ້າພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ໃນທົ່ວປະເທດເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ວ່າການ ກະຊວງ ອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ດຣ. ນາມ ວິຍະເກດ